ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

1278

ເລກທີ: ........................./ກກປມ

ນະຄອນຫຼວງວຽງຈັນ, ວັນທີ: 23 SEP 2015

ຮຽນ: ບັນດາ ທ່ານ ປະທານອົງການຈັດຕັ້ງທາງສັງຄົມ

ເລື່ອງ: ຮັບຮອງເອົາການຄັດເລືອກຕົວແທນສະມາຄົມເຂົ້າໃນຂະບວນການແຜນງານຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT-VPA)

- ອີງຕາມແຈ້ງການເລກທີ່ 986/ຫລບ.ກລຂ ລົງວັນທີ່ 18.6.2015 ວ່າດ້ວຍການເຫັນດີໃຫ້ຈັດຕັ້ງປະຕິບັດແຜນງານ FLEGT-VPA
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ່ 65/ນຍ ລົງວັນທີ່ 19.8.2015 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳລະດັບຊາດ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້ ການຄຸ້ມຄອງ ແລະ ການຄ້າໄມ້ ແລະ ການເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ
- ອີງຕາມບົດລາຍງານຂອງກອງປະຊຸມສ້າງສະມາຊິກ CSO FLEGT ຂອງລາວ ແລະການຄັດເລືອກຜູ້ຕາງໜ້າ ເພື່ອເຂົ້າຂະບວນການ FLEGT-VPA.

ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນນາມເປັນຈຸດປະສານງານ FLEGT ຂໍຖືເປັນກຽດ ແຈ້ງມາຍັງບັນດາທ່ານຊາບວ່າ ພາຍຫລັງທີ່ໄດ້ຮັບບົດລາຍງານກ່ຽວກັບຂະບວນການຄັດເລືອກເອົາຕົວແທນອົງການຈັດຕັ້ງທາງສັງຄົມເຂົ້າໃນຂະບວນການແຜນງານຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ເຫັນວ່າຂະບວນການຄັດເລືອກ ດັ່ງກ່າວມີຄວາມຊັດເຈນ ລະອຽດ ແລະ ເປັນຂັ້ນເປັນຕອນດີ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ອອກໜັງສືສະບັບນີ້ເພື່ອເປັນການຮັບຮອງເອົາຜົນການຄັດເລືອກສຳລັບຜູ້ຕາງໜ້າອົງການຈັດຕັ້ງທາງສັງຄົມ ຊຶ່ງມີລາຍຊື່ດັ່ງນີ້ຄື:

1. ສະມາຄົມຊີວະນານາພັນ
2. ສະມາຄົມອານຸລັກສັດປ່າລາວ
3. ສະມາຄົມຝຶກອົບຮົມ ແລະ ພັດທະນາຊຸມຊົນ
4. ສະມາຄົມສົ່ງເສີມຄວາມຮູ້ກ່ຽວກັບການຄົ້ນຄ້ວາ ແລະ ພັດທະນາຊົນນະບົດ
5. ສະມາຄົມແມ່ຍິງຮ່ວມໃຈພັດທະນາ

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ມີຄວາມຍິນດີເປັນຢ່າງຍິ່ງ ທີ່ຈະຮັບເອົາບັນດາອົງການທີ່ໄດ້ຮັບຄັດເລືອກເຂົ້າໃນຄະນະຕ່າງໆຄື: ຄະນະກຳມະການຊີ້ນຳລະດັບຊາດ, ຄະນະກຳມະການຊຸກຍູ້ການເຈລະຈາ ແລະ ຄະນະວິຊາການ ໃນຂະບວນການແຜນງານຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້. ດັ່ງນັ້ນ, ເພື່ອເຮັດໃຫ້ວຽກງານທີ່ກ່າວໄປນັ້ນເວົ້າລວມ ແລະ ເວົ້າສະເພາະ ກໍ່ຄືແຜນງານດັ່ງກ່າວໄດ້ຖືກຈັດຕັ້ງປະຕິບັດໄປຕາມແຜນການ ແລະ ເວລາທີ່ກຳນົດໄວ້ໃຫ້ມີປະສິດທິພາບ ດັ່ງນັ້ນຈຶ່ງຮຽກຮ້ອງມາຍັງບັນດາທ່ານຈົ່ງໄດ້ພາກັນຄັດເລືອກຕົວແທນເຂົ້າໃນຄະນະດັ່ງກ່າວໃຫ້ເໝາະສົມໃນວຽກງານພັດທະນາວຽກງານການປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ແລະ ການຕົກລົງຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA) ລະຫວ່າງ ສປປ ລາວ ກັບ ສະຫະພາບເອີລົບ.

ຫົວໜ້າກົມກວດກາປ່າໄມ້

ຄຳພຸດ ພັນດານຸວົງ